ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງ

ເລກທີ.......06...../ຈຂອປ
ອັດຕະປື, ວັນທີ.10 ສິງຫາ 2022

# ຄໍາສັ່ງ
# ວ່າດ້ວຍການນໍາໃຊ້ພາຫະນະ
# ຕາມເສັ້ນທາງຫຼວງທີ່ບໍ່ຖືກຕ້ອງຕາມກົດໝາຍ ພາຍໃນ ແຂວງ ອັດຕະປື

**ເຖິງ: ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ-ປກສ ແຂວງ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ຫົວໜ່ວຍທຸລະກິດ, ຜູ້ປະ ກອບການ, ປະຊາຊົນບັນດາເຜົ່າທົ່ວແຂວງ ອັດຕະປື.**

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015; ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍການຂົນສົ່ງທາງບົກ (ສະບັບປັບປຸງ) ເລກທີ24/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍການຈະລາຈອນທາງບົກ(ສະບັບປັບປຸງ)ເລກທີ 23/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ດໍາລັດວ່າດ້ວຍກົດຈະລາຈອນທາງບົກ ສະບັບເລກທີ 615/ລບ, ລົງວັນທີ 9 ທັນວາ 2020;
- ອີງຕາມ ໜັງສືສະເໜີຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ ສະບັບເລກທີ 473/ປກສຂ, ລົງວັນທີ 21 ມີນາ 2022;

ເພື່ອເປັນການຄວບຄຸມການສັນຈອນ ແລະ ການນໍາໃຊ້ພາຫະນະຕາມເສັ້ນທາງຫຼວງ ໃຫ້ມີຄວາມສະດວກ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍ ເຮັດໃຫ້ຜູ້ນໍາໃຊ້ພາຫະນະຕາມເສັ້ນທາງຫຼວງ ປະຕິບັດໃຫ້ຖືກຕ້ອງຕາມກົດລະບຽບການສັນຈອນຕາມເສັ້ນທາງຫຼວງ ແນໃສ່ຫຼຸດຜ່ອນອຸບປະຕິເຫດ, ຄວາມແອອັດໃນການສັນຈອນ, ປົກປ້ອງຊີວິດ, ຊັບສິນຂອງບຸກຄົນ ແລະ ສາທາລະນະ ໃຫ້ມີຄວາມສະຫງົບປອດໄພ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

## ເຈົ້າແຂວງ ອອກຄໍາສັ່ງ:

1. ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີພາຫະນະຮັບໃຊ້ຢູ່ໃນຄວາມຮັບຜິດຊອບຂອງຕົນເຊັ່ນ: ລົດຈັກ, ລົດໃຫຍ່ ທີ່ບໍ່ທັນຂຶ້ນທະບຽນ (ຕິດປ້າຍ) ໃຫ້ນໍາເອົາພາຫະນະດັ່ງກ່າວໄປຂຶ້ນທະບຽນ (ຕິດປ້າຍ) ນໍາພາກ ສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງຕາມລະບຽບການ;

2. ການນຳໃຊ້ພາຫະນະທີ່ຕິດປ້າຍທະບຽນເກົ່າ, ແຕກ, ຫັກ, ເສຍ, ເອກະສານຕົກເຫຼ່ຍ, ຕົວໜັງສື ຫຼື ຕົວເລກບໍ່ແຈ້ງ ຫຼື ລຶບ ໃຫ້ສະເໜີແຈ້ງຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອປະກອບໃຫ້ຖືກຕ້ອງຕາມລະບຽບການ;
3. ບັນດາພາຫານະທີ່ມີເອກະສານຖືກຕ້ອງຄົບຖ້ວນແຕ່ຍັງບໍ່ທັນໄປຂຶ້ນທະບຽນຕິດປ້າຍ ໃຫ້ໄປຂຶ້ນທະບຽນນຳພະແນກ ຍທຂ ແລ້ວໄປຕິດປ້າຍນຳພະແນກຈະລາຈອນແຂວງ ບໍ່ໃຫ້ກາຍ 15 ວັນພາຍຫຼັງທີ່ຊື້ມາແລ້ວ;
4. ບັນດາຜູ້ຂັບຂີ່ພາຫະນະທຸກຊະນິດທີ່ແລ່ນສັນຈອນຢູ່ຕາມເສັ້ນທາງຫຼວງຕ້ອງເອົາໃຈໃສ່ປະຕິບັດກົດລະບຽບການສັນຈອນຢ່າງເຂັ້ມງວດ;
5. ຜູ້ຂັບຂີ່ພາຫະນະທຸກປະເພດ ຕ້ອງໄດ້ຜ່ານການຝຶກອົບຮົມກົດລະບຽບການສັນຈອນ ແລະ ຕ້ອງມີໃບອະນຸຍາດຂັບຂີ່ຕາມຂະໜາດລົດທີ່ຕົນຂັບຂີ່ຖືກຕ້ອງຕາມລະບຽບການ;
6. ຜູ້ຂັບຂີ່ພາຫະນະປະເພດລົດຈັກ ແລະ ຜູ້ຊ້ອນທ້າຍ ຕ້ອງໃສ່ໝວກກັນກະທົບທຸກຄັ້ງໃນເວລາຂັບຂີ່ ແລະ ຜູ້ຂັບຂີ່ພາຫະນະປະເພດລົດໃຫຍ່ ແລະ ຜູ້ໂດຍສານ ຕ້ອງໃສ່ສາຍຮັດນິລະໄພທຸກຄັ້ງ;
7. ລົດຂົນສົ່ງສິນຄ້າ, ຂົນສົ່ງໂດຍສານ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການຂົນສົ່ງທາງບົກ ຢ່າງເຂັ້ມງວດ ລົດໂດຍສານອະນຸຍາດ ຮັບເອົາຄົນໂດຍສານຕາມບ່ອນນັ່ງທີ່ອະນຸຍາດ, ສະເພາະລົດຂົນສົ່ງສິນຄ້າ, ລົດຂົນສົ່ງດິນ, ແຮ່ຊາຍ ຕ້ອງມີແນວຫຸ້ມຫໍ່, ມັດແໜ້ນ ເພື່ອຮັບປະກັນບໍ່ໃຫ້ວັດຖຸເຄື່ອງຂອງຕົກເຮ່ຍຊະຊາຍຕາມເສັ້ນທາງຫຼວງ ເຊິ່ງເປັນການສ້າງຄວາມເປິເປື້ອນບໍ່ຈົບງາມເຮັດໃຫ້ການສັນຈອນພົບຄວາມຫຍຸ້ງຍາກສັບສົນ;
8. ການຍ່າງຕາມທາງ ແລະ ຍ່າງຂ້າມທາງໃນຕົວເມືອງເທດສະບານ ໃຫ້ປະຕິບັດດັ່ງນີ້:
   - ຍ່າງໄປຕາມທາງທີ່ໄດ້ກຳນົດໄວ້ ສຳລັບຄົນຍ່າງຖ້າຫາກບໍ່ມີທາງສຳລັບຄົນຍ່າງ ກໍໃຫ້ຍ່າງລຽບຕາມແຄມທາງເບື້ອງຊ້າຍ ເພື່ອໃຫ້ສາມາດແນມເຫັນລົດທີ່ແລ່ນມາໃນທາງກົງກັນຂ້າມ;
   - ການຍ່າງຂ້າມທາງ ແມ່ນໃຫ້ຍ່າງຂ້າມຢູ່ບ່ອນກຳນົດໃຫ້ເທົ່ານັ້ນ ບ່ອນທີ່ມີສັນຍາລັກທາງມ້າລາຍ.
9. ພາຫານະທຸກປະເພດທີ່ແລ່ນຢູ່ເທິງທາງຫຼວງ ຕ້ອງໄດ້ກວດກາເຕັກນິກໃຫ້ຄົບຖ້ວນຕາມມາດຖານຂອງໂຮງງານທີ່ໄດ້ຜະລິດອອກ;
10. ຂໍ້ຫ້າມໃນການນຳໃຊ້ພາຫະນະຕາມເສັ້ນທາງຫຼວງ:
    - ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳເອົາພາຫະນະໄປດັດແປງສະພາບເຕັກນິກ ຫຼື ນຳໃຊ້ອຸປະກອນເສີມແຕ່ງໂດຍບໍ່ໄດ້ຮັບອະນຸຍາດ;
    - ຫ້າມບັນດາຜູ້ປະກອບການ, ຮ້ານສ້ອມແປງພາຫະນະ ໃຫ້ຄວາມຮ່ວມມືໃນການດັດແປງສະພາບເຕັກນິກ ຫຼື ໃຊ້ອຸປະກອນເສີມແຕ່ງໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
    - ຫ້າມນຳໃຊ້ລົດທີ່ບໍ່ມີເອກະສານ ຫຼື ຕິດປ້າຍບໍ່ຖືກຕ້ອງຕາມເອກະສານຂອງລົດ ເພື່ອນຳໃຊ້ຢູ່ຕາມເສັ້ນທາງຫຼວງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
    - ຫ້າມນຳໃຊ້ພາຫະນະທີ່ບໍ່ມີເອກະສານຖືກຕ້ອງຄົບຖ້ວນເຂົ້າໃນການຂົນສົ່ງເພື່ອປະກອບດຳເນີນທຸລະກິດ ຫຼື ເຄື່ອນໄຫວແລ່ນຢູ່ຕາມເສັ້ນທາງຫຼວງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
    - ຫ້າມຜູ້ຂັບຂີ່, ຂັບຂີ່ຍານພາຫະນະໂດຍບໍ່ມີໃບອະນຸຍາດຂັບຂີ່ ຫຼື ມີໃບຂັບຂີ່ຍານພາຫະນະບໍ່ຖືກຕ້ອງຕາມປະເພດຍານພາຫະນະ;
    - ຫ້າມເດັກທີ່ມີອາຍຸຕ່ຳກວ່າ 9 ປີ ຂັບຂີ່ລົດຖີບ ແລະ ເດັກທີ່ມີອາຍຸຕ່ຳກວ່າ 12 ປີ ຂັບຂີ່ລົດສະກູດເຕີ້ໄຟຟ້າ;
    - ຫ້າມຂີ່ລົດໄວ, ໃຊ້ສຽງດັງ, ຂີ່ລົດເປັນພົງ, ເປັນແພ, ຂີ່ລົດແຂ່ງກັນຕາມເສັ້ນທາງຫຼວງ ສ້າງສຽງລົບກວນໃຫ້ແກ່ສັງຄົມ;
    - ຫ້າມໃຊ້ໂທລະສັບມືຖື, ເບິ່ງໂທລະພາບ, ຮູບພາບ, ວີຊີດີ, ດີວີດີ, ເຄື່ອງຫຼິ້ນເອເລັກໂຕຣນິກປະເພດຕ່າງໆໃນເວລາຂັບຂີ່;
    - ຫ້າມຜູ້ຂັບຂີ່ຈອດລົດເທິງທາງຄົນຍ່າງ, ຈອດລົດບ່ອນມີປ້າຍຫ້າມຈອດ, ຈອດລົດບ່ອນມີເຄື່ອງໝາຍຫ້າມຈອດ ຫຼື ຈອດລົດໃກ້ທາງ 3 ແຍກ 4 ແຍກໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

- ຫ້າມສ້າງສິ່ງເປິເປື້ອນຕາມເສັ້ນທາງຫຼວງ, ທຳລາຍເຄື່ອງປະກອບເສັ້ນທາງຫຼວງ, ທຳລາຍລະບົບປ້າຍສັນຍານຈະລາຈອນ ຫຼື ໃຊ້ວັດສະດຸໃດໜຶ່ງໄປປິດບັງປ້າຍສັນຍານຈະລາຈອນ ເຮັດໃຫ້ນັກຂັບຂີ່ບໍ່ສາມາດເບິ່ງເຫັນໄດ້;
- ຫ້າມກໍ່ສ້າງ, ຕໍ່ເຕີມອາຄານ, ສິ່ງປຸກສ້າງ, ວາງເຄື່ອງຂາຍ ຫຼື ວາງສິ່ງຂອງອື່ນໆທີ່ເຫຼື່ອມເອົາເຂດສະຫງວນຂອງທາງຫຼວງ;
- ຫ້າມດຳເນີນກິດຈະກຳຕ່າງໆຢູ່ບ່ອນທາງໂຄ້ງ, ທາງແຄບ ຫຼື ແຄມທາງທີ່ບໍ່ມີບ່ອນຈອດລົດ ທີ່ເປັນອັນຕະລາຍ ແລະ ມີຄວາມສ່ຽງຕໍ່ການເກີດອຸບປະຕິເຫດ;
- ຫ້າມລ້ຽງ ແລະ ປ່ອຍສັດທຸກຊະນິດຕາມເສັ້ນທາງຫຼວງ, ການເຄື່ອນຍ້າຍສັດຕາມເສັ້ນທາງຫຼວງຕ້ອງມີຜູ້ຄວບຄຸມ ແລະ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ;

11. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດທີ່ໄດ້ລະເມີດຄຳສັ່ງສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ, ສັງຄົມ, ບຸກຄົນອື່ນ ຕ້ອງຖືກປະຕິບັດມາດຕະການດ້ວຍຮູບການສຶກສາອົບຮົມ, ກ່າວເຕືອນ, ປັບໃໝຕາມກໍລະນີ, ໃນກໍລະນີຮ້າຍແຮງຈະຖືກດຳເນີນຄະດີຕາມກົດໝາຍ ແລະ ລະບຽບການ;

12. ການຈັດຕັ້ງປະຕິບັດ

ມອບໃຫ້ ກອງບັນຊາການ ປກສ ແຂວງ ອັດຕະປື ແລະ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ ອັດຕະປື ເປັນຜູ້ຈັດຕັ້ງປະຕິບັດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍຫຼັງຮັບຊາບຄຳສັ່ງສະບັບນີ້ແລ້ວໃຫ້ເປັນເຈົ້າການໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

13. ຄຳສັ່ງສະບັບນີ້ປ່ຽນແທນຄຳສັ່ງຂອງເຈົ້າແຂວງ ສະບັບເລກທີ 659/ຈຂອປ, ລົງວັນທີ 11 ກໍລະກົດ 2016 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ເຈົ້າແຂວງ

ບ່ອນນຳສົ່ງ:

- ຫ້ອງວ່າການປົກຄອງ ແຂວງ 01 ສະບັບ
- ພະແນກສຶກສາ ແຂວງ 01 ສະບັບ
- ພະແນກ ຍທຂ 01 ສະບັບ
- ກອງບັນຊາການ ປກສ ແຂວງ 01 ສະບັບ

ເລັດ ໄຊຍະພອນ